ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
老挝人民民主共和国
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
和平 独立 民主 统一 繁荣

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company

ເລກທີ 345/ບລຈ
编号：345/LCS
ນະຄອນຫຼວງວຽງຈັນ, ວັນທີ 23 ກໍລະກົດ 2026
2026 年 7 月 23 日，首都万象

ບົດບັນທຶກ
ກອງປະຊຸມຜູ້ຖືຮຸ້ນ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026
老-中证券公众公司
2026 年第一次临时股东会
会议纪要

ກອງປະຊຸມຜູ້ຖືຮຸ້ນ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026, ໄດ້ຈັດຂຶ້ນໃນວັນທີ 09 ກໍລະກົດ 2026 ເວລາ 9:00 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບ ລາວ (ຕລຊລ), ພາຍໃຕ້ການເປັນປະທານກອງປະຊຸມຜູ້ຖືຮຸ້ນໂດຍ **ທ່ານ ນະ ຈັນຕະລິວົງ ສະມາຊິກອົດສະລະ ບລຈ.** ປັດຈຸບັນຈຳນວນຜູ້ຖືຮຸ້ນທັງໝົດຂອງ ບລຈ ມີ 1409 ທ່ານ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 10 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 38 ທ່ານ, ໃນນັ້ນຜູ້ຖືຮຸ້ນທີ່ເຂົ້າຮ່ວມຜ່ານລະບົບອອນລາຍ, ຖືຮຸ້ນ 590,000,000 ຮຸ້ນ ຄິດເປັນ 53.10% ຂອງຈຳນວນຮຸ້ນທັງໝົດ, ລາຍຊື່ຂອງຜູ້ຖືຮຸ້ນລວມທັງໝົດທີ່ເຂົ້າຮ່ວມກອງປະຊຸມ ຜ່ານລະບົບອອນລາຍ ແລະ ສັດສ່ວນການຖືຮຸ້ນ ມີລາຍລະອຽດດັ່ງນີ້:

1. ບໍລິສັດຫຼັກຊັບ ປາຊີຟິກ ຮຸ້ນສ່ວນ ຈຳກັດ, ຖືຮຸ້ນຈຳນວນ 35.10%, ຕາງໜ້າໂດຍ ທ່ານ ລີ ຊາງ ເຫວີ (MR LI CHANGWEI);
2. ບໍລິສັດ ລາວ ອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ, ຖືຮຸ້ນຈຳນວນ 18%, ຕາງໜ້າໂດຍ ທ່ານ ທ່ານ ໂຈ ຄຸນ (MR ZHOU KUN) ມອບສິດໃຫ້ ທ່ານ ເຫີ ໂປເຫວີນ (MR HE BOWEN) ເປັນຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ.

ຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມຖືຮຸ້ນລວມ 1,080,111,000 ຮຸ້ນ ຄິດເປັນ 97.21% ຂອງຈຳນວນຮຸ້ນທັງໝົດຂອງ ບລຈ ຖືວ່າຄົບອົງປະຊຸມຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ກົດລະບຽບຂອງ ບລຈ. ທ່ານ ປະທານ ຈຶ່ງໄດ້ເປີດກອງປະຊຸມຢ່າງເປັນທາງການ, ຊຶ່ງມີລາຍລະອຽດດັ່ງນີ້:

老-中证券公众公司（简称“老-中证券”）于 2026 年 7 月 9 日北京时间 10:00，在老挝万象市赛色塔县蓬覃村的老挝证券交易所（老交所）大楼 8 楼大会议室召开了 2026 年第一次临时股东会。会议由**老-中证券独立董事纳・占达里翁先生**主持。目前

老-中证券股东总有 1409 名，本人亲自出席会议的股东共 10 名，38 名股东授权代表参会，其中 2 名股东线上参会，占股 53.10%，线上参会股东名单及持股比例如下：

1. 太平洋证券股份有限公司，占股 35.10%，股东代表：李长伟；
2. 老挝信息产业有限公司，占股 18%，股东代表：周昆 授权何博文先生代表出席会议。

股东参会合计持有股份 1,080,111,000 股，占公司总股本的 97.21%，符合相关法律法规及公司章程关于参会人数的规定。股东会主席宣布召开股东会，具体如下：

ປະທານກອງປະຊຸມ ໄດ້ລາຍງານແຕ່ລະວາລະຂອງກອງປະຊຸມ ແລະ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຊາບ. ຫຼັງຈາກນັ້ນ, ກອງປະຊຸມຜູ້ຖືຮຸ້ນ ຈຶ່ງໄດ້ດຳເນີນແຕ່ລະວາລະຕາມລຳດັບ, ລາຍລະອຽດດັ່ງລຸ່ມນີ້:

股东会主席向参会者汇报了会议议程及投票表决方式，接下来，股东会按照各项议程进行，具体如下：

ກອງປະຊຸມ ໄດ້ພິຈາລະນາ, ມີຄຳເຫັນ ແລະ ມີການຕົກລົງໃນແຕ່ລະວາລະດັ່ງນີ້:

股东会审议并通过了以下议案：

<u>ວາລະທີ 1: ພິຈາລະນາ ແລະ ຮັບຮອງ ປັບປຸງແຜນການນຳໃຊ້ທຶນທີ່ລະດົມໄດ້ຜ່ານການອອກຈຳໜ່າຍຮຸ້ນຕໍ່ມວນຊົນຄັ້ງທຳອິດ ຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ.</u>

<u>议案一：审议变更老-中证券公众公司首次公开募股募集资金使用方案。</u>

ປະທານກອງປະຊຸມຜູ້ຖືຮຸ້ນ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງປັບປຸງແຜນການນຳໃຊ້ທຶນທີ່ລະດົມໄດ້ຜ່ານການອອກຈຳໜ່າຍຮຸ້ນຕໍ່ມວນຊົນຄັ້ງທຳອິດ ຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ໂດຍວາລະນີ້ຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

股东会主席提请股东会审议变更老-中证券公众公司首次公开募股募集资金使用方案，本议案的赞成票数须超过出席会议一半票数。

ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງປັບປຸງແຜນການນຳໃຊ້ທຶນທີ່ລະດົມໄດ້ຜ່ານການອອກຈຳໜ່າຍຮຸ້ນຕໍ່ມວນຊົນຄັ້ງທຳອິດຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ໂດຍມີລາຍລະອຽດດັ່ງນີ້:

ປັບປຸງແຜນການນຳໃຊ້ທຶນ 10,000,000,000 ກີບຈາກການລົງທຶນສ້າງຕັ້ງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ມາເປັນການເພີ່ມກະແສເງິນສົດ ຂອງ ບລຈ, ພ້ອມທັງລາຍງານ ສຄຄຊ ແລະ ເປີດເຜີຍຂໍ້ມູນດັ່ງກ່າວຜ່ານ ຕລຊລ. ບລຈ ຈະມີແຜນນຳໃຊ້ທຶນດັ່ງກ່າວ ເຂົ້າໃນການຮັບປະກັນຄ່າໃຊ້ຈ່າຍ Software and Hardware ຂອງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື (MTS) ເພື່ອໃຫ້ພະແນກນາຍໜ້າ ຊື້-ຂາຍ ຫຼັກຊັບ ສາມາດອຳນວຍຄວາມສະດວກແກ່ການຊື້-ຂາຍຫຼັກຊັບ ຂອງລູກຄ້າ, ດຶງດູດນັກລົງທຶນມາເປີດບັນຊີນຳ ບລຈ ພ້ອມທັງເພີ່ມລາຍຮັບນາຍໜ້າຊື້-ຂາຍຫຼັກຊັບ, ສ່ວນຈຳນວນເງິນທີ່ເຫຼືອ ຈະລົງທຶນໃສ່ເງິນຝາກນຳທະນາຄານທຸລະກິດ. ມອບສິດໃຫ້ ບລຈ ຮ່າງແຜນງົບປະມານ Software and Hardware ຂອງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື, ເພື່ອສະເໜີຕໍ່ສະພາບໍລິຫານຮັບຮອງ. ໃນໄລຍະດັ່ງກ່າວ, ເພື່ອຍົກສູງປະສິດທິພາບແຫ່ງການນຳໃຊ້ທຶນຮອນ, ເຫັນດີນຳໃຊ້

ທຶນທັງໝົດ 10,000,000,000 ກີບດັ່ງກ່າວ, ລົງທຶນໃສ່ເງິນຝາກນຳທະນາຄານທຸລະກິດ, ຈົນຮອດສະພາບໍລິຫານ ເຫັນດີຮັບຮອງ ແຜນງົບປະມານ Software and Hardware ຂອງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື.

股东会审议通过变更老-中证券公众公司首次公开募股募集资金使用方案，细节如下：

将原计划用于设立基金管理公司的 10,000,000,000 基普（约合 306.65 万元），调整为用于补充老-中证券的流动资金，并向证管委办公厅报告以及通过老交所进行信息披露。老-中证券计划将上述资金用于保障手机证券交易系统（MTS）开发软硬件费用，让经纪业务部门能为客户证券交易提供便利，吸引投资者到老-中证券开户并增加经纪业务收入，剩余资金将用于银行存款投资。授权老-中证券起草手机证券交易系统开发软硬件费用预算，报董事会审批。期间，为提高资金使用效率，允许将上述 10,000,000,000 基普（约合 306.65 万元）全部投资于银行存款，直至董事会审议通过手机证券交易系统开发软硬件费用预算。

- ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ ແລະ ມີຄຳເຫັນ.

  股东会主席提请各位股东就本议案进行提问并发表意见。

  - ຄຳຖາມຈາກ **ທ່ານ ນາງ ຕຸກຕາ ແກ້ວວິຈິດ** ຜູ້ຕາງໜ້າຂອງ **ທ່ານ ໄກວັນ ກະດາວານິດ** ຜູ້ຖືຮຸ້ນ: ບລຈ ໄດ້ສົ່ງໜັງສືເຊີນເຂົ້າຮ່ວມກອງປະຊຸມລວມມີ 02 ຄັ້ງ ແລະ ໃນຄັ້ງທີ 02 ນີ້ຫ່າງຈາກມື້ຈັດກອງປະຊຸມຜູ້ຖືຮຸ້ນຖືວ່າເວລາຂ້ອນຂ້າງສັ້ນຫຼາຍ, ຂໍຖາມວ່າການສົ່ງໜັງສືເຊີນນີ້ຖືກຕາມລະບຽບຂອງ ສຄຄຊ ຫຼື ບໍ່?

    杜达·凯崴吉女士（代表股东**凯万·格达瓦尼先生**）的提问：老-中证券共两次发送股东会邀请函，其中第二次会议邀请函距离股东会召开日期时间较短。请问该会议邀请函的发送是否符合证管委的相关规定？

  - ທ່ານ ລິນ ລີ, ຜູ້ອຳນວຍການ : ຂ້າພະເຈົ້າຂໍອະທິບາຍໃຫ້ເຂົ້າໃຈດັ່ງນີ້: ບລຈ ໄດ້ອອກໜັງສືເຊີນເຂົ້າຮ່ວມກອງປະຊຸມຄັ້ງທຳອິດໃນວັນທີ 24 ມິຖຸນາ 2026, ແຕ່ເນື່ອງຈາກໄດ້ຮັບຄຳທັກທ້ວງຈາກ ສຄຄຊ ໃຫ້ຈັດກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ເພື່ອຮັບຮອງສະເໜີລາຍຊື່ ທ່ານ ຫວາງ ເວີຍ ເປັນຜູ້ອຳນວຍການ ແລະ ຜູ້ຕາງໜ້າທາງກົດໝາຍຄົນໃໝ່ຂອງ ບລຈ ກ່ອນນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ; ບລຈ ຈຶ່ງໄດ້ສົ່ງໜັງສືເຊີນຄັ້ງທີ 02 ໃນວັນທີ 1 ກໍລະກົດ 2026 ບໍ່ຖືວ່າເປັນການປັບປຸງໜັງສືເຊີນ ແຕ່ເປັນສະບັບເພີ່ມເຕີມເພື່ອເພີ່ມລາຍລະອຽດເຂົ້າໃນເອກະສານໃຫ້ຄົບຖ້ວນ ຕາມການຊີ້ນຳຂອງ ສຄຄຊ.

    李林先生（总经理）答复如下：老-中证券于 2026 年 6 月 24 日首次公示股东会邀请函。后因收到证管委反馈意见，要求先召开临时董事会会议，审议通过提名王崴先生担任老-中证券新任总经理及法定代表人事项后，再提交股东会审议。因此，老-中证券于 2026 年 7 月 1 日发送第二次会议邀请函。该第二次会议邀请函并非对原会议邀请函的修改，而是根据证管委的指导意见，对会议文件内容进行补充完善的补充文件。

- ທ່ານ ນາງ ຕຸກຕາ ແກ້ວວິຈິດ ຜູ້ຕາງໜ້າຂອງ ທ່ານ ໄກວັນ ກະດາວານິດ ຜູ້ຖືຮຸ້ນ ບໍ່ມີຄຳເຫັນເພີ່ມເຕີມ.

  发言股东杜达·凯崴吉女士（代表股东凯万·格达瓦尼先生）表示无异议。

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:
股东会以多数赞成票通过议案如下：

- ເຫັນດີ 1,080,111,000 ສຽງ ຄິດເປັນ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
  赞成票：1,080,111,000 票，占出席会议总票数的 100%
- ບໍ່ເຫັນດີ 0 ສຽງ ຄິດເປັນ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
  反对票：0 票，占出席会议总票数的 0%

<u>ວາລະທີ 2: ພິຈາລະນາ ແລະ ຮັບຮອງການປັບປຸງໂຄງປະກອບຄະນະອຳນວຍການຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ.</u>

<u>议案二：审议变更老-中证券公众公司管理层成员。</u>

ປະທານກອງປະຊຸມຜູ້ຖືຮຸ້ນ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການປັ່ງປຸງໂຄງປະກອບຄະນະອຳນວຍການຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ໂດຍວາລະນີ້ຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

股东会主席提请股东会审议变更老-中证券公众公司管理层成员，本议案的赞成票数须超过出席会议一半票数。

ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງການປັ່ງປຸງໂຄງປະກອບຄະນະອຳນວຍການຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ໂດຍມີລາຍລະອຽດດັ່ງນີ້:

ມອບໃຫ້ສະພາບໍລິຫານແຕ່ງຕັ້ງທ່ານ ຫວາງ ເວີຍ (MR WANG WEI) ເປັນຜູ້ອຳນວຍການ ແລະ ຜູ້ຕາງໜ້າທາງກົດໝາຍ ຂອງ ບລຈ. ພ້ອມກັນນັ້ນ, ທ່ານ ລິນ ລີ ບໍ່ໄດ້ດຳລົງຕຳແໜ່ງ ອຳນວຍການ ແລະ ຜູ້ຕາງໜ້າທາງກົດໝາຍ ຂອງ ບລຈ ອີກຕໍ່ໄປ. ໂຄງປະກອບຄະນະອຳນວຍການພາຍຫຼັງປັບປຸງ ປະກອບມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ຫວາງ ເວີຍ ເປັນຜູ້ອຳນວຍການ ແລະ ຜູ້ຕາງໜ້າທາງກົດໝາຍ;
2. ທ່ານ ປອ. ສຸດທິເດດ ບຸນລືໄຊ ເປັນຮອງຜູ້ອຳນວຍການ.

股东会审议通过变更老-中证券公众公司管理层成员，细节如下：

交由董事会任命王崴先生担任老-中证券新一任总经理兼法定代表人。同时，李林不再担任老-中证券总经理兼法定代表人职务。变更后的老-中证券管理层成员名单如下：

1.	王崴	总经理、法定代表人
2.	苏提德·本勒赛（博士）	副总经理

➢ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ ແລະ ມີຄຳເຫັນ.

股东会主席提请各位股东就本议案进行提问并发表意见。

- ທ່ານ ນາງ ອອນອານິງ ແສງວິໄລປະເສີດ, ຜູ້ຖືຮຸ້ນ: ຂໍໃຫ້ແນະນຳປະຫວັດໂດຍຫຍໍ້ຂອງທ່ານ ຫວາງ ເວີຍ ຜູ້ທີ່ຈະມາຮັບຕຳ ແໜ່ງໃໝ່.

  股东昂阿农·桑维莱巴色女士：请简要介绍新拟任总经理的王崴先生的个人简历。

- ທ່ານ ລິນ ລີ, ຜູ້ອຳນວຍການ: ໄດ້ແນະນຳໂດຍຫຍໍ້ກ່ຽວກັບປະຫວັດການສຶກສາ ແລະ ປະສົບການເຮັດວຽກຂອງ ທ່ານ ຫວາງ ເວີຍ. ທ່ານ ນາງ ອ່ອນອານິງ ແສງວິໄລປະເສີດ ຜູ້ຖືຮຸ້ນ ບໍ່ມີຄຳເຫັນເພີ່ມເຕີມ.

  李林先生（总经理）简要介绍了王崴先生的教育背景及工作经验。发言股东昂阿农·桑维莱巴色女士表示无异议。

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

股东会以多数赞成票通过议案如下：

- ເຫັນດີ 1,080,111,000 ສຽງ ຄິດເປັນ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

  赞成票：1,080,111,000 票，占出席会议总票数的 100%

- ບໍ່ເຫັນດີ 0 ສຽງ ຄິດເປັນ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

  反对票：0 票，占出席会议总票数的 0%

<u>ວາລະທີ 3: ພິຈາລະນາ ແລະ ຮັບຮອງການປັບປຸງໂຄງປະກອບສະມາຊິສະພາບໍລິຫານຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ.</u>

<u>议案三：审议变更老-中证券公众公司董事会成员。</u>

ປະທານກອງປະຊຸມຜູ້ຖືຮຸ້ນ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການປັບປຸງໂຄງປະກອບສະມາຊິສະພາບໍລິຫານຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ໂດຍວາລະນີ້ຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

股东会主席提请股东会审议变更老-中证券公众公司董事会成员，本议案的赞成票数须超过出席会议一半票数。

ກອງປະຊຸມຜູ້ຖືຮຸ້ນໄດ້ພິຈາລະນາ ແລະ ຮັບຮອງການປັບປຸງໂຄງປະກອບສະມາຊິກສະພາບໍລິຫານຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ໂດຍມີລາຍລະອຽດດັ່ງນີ້:

1. ເຫັນດີ ທ່ານ ລິນ ລີ ລາອອກຈາກຕຳແໜ່ງສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານ ບລຈ ແລະ ແຕ່ງຕັ້ງ ທ່ານ ຫວາງ ເວີຍ (MR WANG WEI) ເປັນສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານຜູ້ໃໝ່ ເພື່ອປ່ຽນແທນ ທ່ານ ລິນ ລີ;

2. ເຫັນດີ ທ່ານ ຣສ. ປອ. ປິຍະ ວິງພິດ ລາອອກຈາກຕຳແໜ່ງ ສະມາຊິກອິດສະລະ ບລຈ ແລະ ແຕ່ງຕັ້ງ ທ່ານ ຣສ. ປອ ໄຊພອນ ກອງມະນີລາ ເປັນສະມາຊິກອິດສະລະຜູ້ໃໝ່ ເພື່ອປ່ຽນແທນ ທ່ານ ຣສ. ປອ. ປິຍະ ວິງພິດ;
3. ເຫັນດີ ທ່ານ ຫວາງ ເວີ (MR WANG WEI) ລາອອກຈາກຕຳແໜ່ງ ສະມາຊິກອິດສະລະ ບລຈ ແລະ ແຕ່ງຕັ້ງ ທ່ານ ປອ. ເຈຍ ຮຸຍ (MR JIA HUI) ເປັນສະມາຊິກອິດສະລະຜູ້ໃໝ່ ເພື່ອປ່ຽນແທນ ທ່ານ ຫວາງ ເວີ (MR WANG WEI) ;
4. ຫຼັງຈາກສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານຄົນໃໝ່ 1 ທ່ານ ແລະ ສະມາຊິກອິດ ສະລະຄົນໃໝ່ 2 ທ່ານ ທີ່ຖືກແຕ່ງຕັ້ງໃໝ່ດັ່ງກ່າວ ເຂົ້າຮັບຕຳແໜ່ງແລ້ວ, ຜູ້ດຳລົງຕຳແໜ່ງເດີມຈະຕ້ອງ ດຳເນີນການມອບ-ຮັບວຽກງານກັບຜູ້ດຳລົງຕຳແໜ່ງໃໝ່ແບບລາຍບຸກຄົນໃຫ້ສຳເລັດຮຽບຮ້ອຍກ່ອນ, ຈຶ່ງຈະສາມາດພົ້ນຈາກຕຳແໜ່ງໄດ້ຢ່າງເປັນທາງການ ເພື່ອຮັບປະກັນໃຫ້ວຽກງານຂອງສະພາບໍລິຫານ ຂອງ ບລຈ ດຳເນີນໄປຢ່າງຕໍ່ເນື່ອງ ແລະ ລາບລື່ນ.

ພາຍຫຼັງຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານດັ່ງກ່າວແລ້ວ, ໂຄງປະກອບສະມາຊິກສະພາບໍລິຫານ ບລຈ 09 ທ່ານ ມີລາຍຊື່ດັ່ງນີ້:

1. ທ່ານ ໜູໄຊ ພູມສຸວັນ ເປັນປະທານສະພາບໍລິຫານ;
2. ທ່ານ ລີ ຊາງເວີ (MR LI CHANGWEI) ເປັນຮອງປະທານສະພາບໍລິຫານ;
3. ທ່ານ ໂຈ ຄຸນ (MR ZHOU KUN) ເປັນສະມາຊິກສະພາບໍລິຫານ ທີ່ບໍ່ມີສ່ວນຮ່ວມໃນການ ບໍລິຫານ;
4. ທ່ານ ຈາງ ຫົງບິນ (MR ZHANG HONGBIN) ເປັນສະມາຊິກສະພາບໍລິຫານ ທີ່ບໍ່ມີສ່ວນ ຮ່ວມໃນການບໍລິຫານ;
5. ທ່ານ ສິມພິງ ບໍລິບຸດ ເປັນສະມາຊິກສະພາບໍລິຫານ ທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ;
6. ທ່ານ ຫວາງ ເວີ (MR WANG WEI) ເປັນສະມາຊິກສະພາບໍລິຫານ ທີ່ມີສ່ວນຮ່ວມໃນການ ບໍລິຫານ;
7. ທ່ານ ຣສ. ປອ ໄຊພອນ ກອງມະນີລາ ເປັນສະມາຊິກອິດສະລະ;
8. ທ່ານ ປອ. ເຈຍ ຮຸຍ (MR JIA HUI) ເປັນສະມາຊິກອິດສະລະ;
9. ທ່ານ ນະ ຈັນຕະລີວິງ ເປັນສະມາຊິກອິດສະລະ.

股东会审议通过变更老-中证券公众公司董事会成员，细节如下：

1. 同意李林辞去老-中证券执行董事职务并任命王崴担任老-中证券执行董事，接替李林工作；
2. 同意比亚·翁匹副教授、博士辞去老-中证券独立董事职务并任命赛蓬·贡马尼拉副教授、博士担任老-中证券独立董事，接替比亚·翁匹副教授、博士工作；
3. 同意王崴辞去老-中证券独立董事职务并任命贾辉(博士)担任老-中证券独立董事，接替王崴工作；

4. 上述新的执行董事和 2 名独立董事到任后，原执行董事和独立董事应与新任执行董事和独立董事一对一进一步完成工作交接后方可正式离任，以确保老-中证券董事会工作平稳过渡。

股东会审议任命上述董事会成员以后，老-中证券 09 位董事会成员名单如下：

1.	努赛·普苏万	董事长；
2.	李长伟	副董事长；
3.	周昆	非执行董事；
4.	张洪斌	非执行董事；
5.	颂蓬·波里布	非执行董事；
6.	王崴	执行董事；
7.	赛蓬·贡马尼拉 副教授、博士	独立董事；
8.	贾辉（博士）	独立董事；
9.	纳·占达里翁	独立董事。

➢ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ. ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃນວາລະນີ້.

股东会主席提请各位股东就本议案进行提问。无股东提问及发表意见。

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

股东会以多数赞成票通过议案如下：

- ເຫັນດີ 1,080,111,000 ສຽງ ຄິດເປັນ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

赞成票：1,080,111,000 票，占出席会议总票数的 100%

- ບໍ່ເຫັນດີ 0 ສຽງ ຄິດເປັນ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

反对票：0 票，占出席会议总票数的 0%

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ແລະ ໄດ້ປະກາດປິດກອງປະຊຸມໃນເວລາ 10:00 ໂມງ ຂອງວັນດຽວກັນ.

股东会主席对出席股东会的股东及股东代表表示感谢并宣布会议于当日北京时间 11:00 闭幕。

ປະທານກອງປະຊຸມ	**ຜູ້ບັນທຶກ**
会议主席	会议记录
ท่าน นะ จันตะลิวิง	ท่าน นาง จันพะพอน สิหาลาด
纳·占达里翁	占帕逢·西哈拉